ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ພັກປະຊາຊົນປະຕິວັດລາວ

ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 121.../ຄອສພ

ນະຄອນຫຼວງວຽງຈັນ, ວັນທີ ໒໒/໐໙/2021

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ ແລະ ເພີ່ມທະວີມາດຕະການສະກັດກັ້ນການແຜ່ລະບາດ, ການຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19

- ອີງຕາມມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 21/3/2013 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະໂຄສະນາອົບຮົມສູນກາງພັກ.
- ອີງຕາມຄຳສັ່ງ ເລກທີ 15/ນຍ, ລົງວັນທີ 21/04/2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນການແຜ່ລະບາດ, ການຄວບຄຸມ ແລະ ການກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19.
- ອີງຕາມຄຳສັ່ງ ສະບັບເລກທີ 016/ຈນວ, ລົງວັນທີ 19/9/2021 ວ່າດ້ວຍມາດຕະການສະກັດກັ້ນການແຜ່ລະບາດ, ການຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ແລະ ການຊີ້ນຳຂອງທ່ານ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ.

## ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກຕົກລົງ:

**ມາດຕາ 1:** ເຫັນດີແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ ແລະ ເພີ່ມທະວີມາດຕະການສະກັດກັ້ນການແຜ່ລະບາດ,ການຄວບຄຸມ ແລະ ການກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ຢູ່ຄະນະໂຄສະນາອົບຮົມສູນກາງພັກ ລາຍລະອຽດມີດັ່ງລຸ່ມນີ້:

1. ສະຫາຍ ນາງ ວິລະວອນ ພັນທະວົງ ຄະນະປະຈຳພັກ, ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ເປັນຫົວໜ້າ ຊີ້ນຳລວມ.
2. ສະຫາຍ ສາຄອນ ພົມມະລາດ ກຳມະການພັກ ຫົວໜ້າຫ້ອງການເປັນຮອງ ແລະ ເປັນຜູ້ປະຈຳການ.
3. ສະຫາຍ ຄຳກອງ ທຳມະເທວາ ກຳມະການພັກ ຮອງຫົວໜ້າກົມອົບຮົມ ເປັນຮອງ.
4. ສະຫາຍ ນາງ ໄພວັນ ວັນນະໄຊ ຮອງຫົວໜ້າ ກົມຈັດຕັ້ງ-ພະນັກງານ ເປັນຄະນະ.
5. ສະຫາຍ ລີຈາວ ໄຊເຢຍຊົ່າງ ຮອງຫົວໜ້າກົມໂຄສະນາ ເປັນຄະນະ.
6. ສະຫາຍ ນາງ ບຸນມາລີ ສີລິດາວົງ ຮອງຫົວໜ້າກົມສັງລວມ ທັງຕາງໜ້າຄະນະກຳມະບານຄະນະໂຄສະນາອົບຮົມສູນກາງພັກ ເປັນຄະນະ.

7. ສະຫາຍ ບົວວົງ ພົມພັກດີ ຮອງຫົວໜ້າວາລະສານໂຄສະນາ ເປັນຄະນະ.
8. ສະຫາຍ ນາງ ມອນສະຫວັນ ແສນໄຕ ຮອງຫົວໜ້າກົມຂໍ້ມູນຂ່າວສານທັງຕາງໜ້າຄະນະສະຫະພັນແມ່ຍິງຄະນະໂຄສະນາອົບຮົມສູນກາງພັກ ເປັນຄະນະ.
9. ສະຫາຍ ນາງ ຈັນທະວົງ ຫຼວງຫຼາດ ຮອງຫົວໜ້າວາລະສານອະລຸນໃໝ່ ເປັນຄະນະ.
10. ສະຫາຍ ນາງ ສຸກສະຫວັນ ອິນຄະວິໄລ ຮອງຫົວໜ້າກົມອົບຮົມ, ເລຂາຊາວໜຸ່ມຄະນະໂຄສະນາອົບຮົມສູນກາງພັກ ເປັນຄະນະ.
11. ສະຫາຍ ສະຫວ່າງ ດາລາແສນ ຫົວໜ້າພະແນກ ຕາງໜ້າຄະນະປ້ອງກັນພາຍໃນ ເປັນຄະນະ.
12. ສະຫາຍ ພຸດວົງ ພົງສະຫວັດດີ ຮອງຫົວໜ້າພະແນກບໍລິຫານ ເປັນຄະນະ.

**ມາດຕາ 2:** ສິດ, ໜ້າທີ່ຂອງຄະນະສະເພາະກິດ ມີຄວາມຮັບຜິດຊອບ ດັ່ງນີ້:

- ມີສິດຄົ້ນຄ້ວາ ແລະ ອອກຄໍາແນະນໍາເພີ່ມເຕີມເປັນຂອງຄະນະໂຄສະນາອົບຮົມສູນກາງພັກ ພາຍຫຼັງທີ່ມີນິຕິກໍາຂອງຂັ້ນເທິງກໍານົດອອກກ່ຽວກັບການ ເພີ່ມມາດຕະການຕ້ານກັບການແຜ່ລະບາດຂອງພະຍາດ COVID-19.
- ມີສິດປະສານງານກັບພາກສ່ວນກ່ຽວຂ້ອງເປັນຕົ້ນແມ່ນ ຄະນະສະເພາະກິດປ້ອງກັນ ແລະ ຕ້ານພະຍາດCOVID-19 ຂັ້ນສູນກາງ ແລະ ຄະນະສະເພາະກິດນະຄອນຫຼວງ.
- ມີສິດສະເໜີ ຂໍນໍາໃຊ້ງົບປະມານລວມຂອງຄະນະໂຄສະນາອົບຮົມສູນກາງພັກເຂົ້າໃນການເຄື່ອນໄຫວວຽກງານຕາມຄວາມຈໍາເປັນ.
- ມີໜ້າທີ່ຕິດຕາມສະພາບການເຄື່ອນໄຫວເຂົ້າ - ອອກຂອງພະນັກງານ, ລວມທັງການເຄື່ອນໄຫວຂອງພະນັກງານລົງທ້ອງຖິ່ນ ແລະ ໄປຕ່າງປະເທດ.
- ມີໜ້າທີ່ສະຫຼຸບລາຍງານ ຜົນການຕິດຕາມການເຄື່ອນໄຫວຂອງພະນັກງານ ໃນແຕ່ລະໄລຍະໃນການປ້ອງກັນພະຍາດ COVID-19 ໃຫ້ຄະນະໂຄສະນາອົບຮົມສູນກາງພັກ ແລະ ຄະນະສະເພາະກິດຂັ້ນສູນກາງ.

**ມາດຕາ 3:** ຫ້ອງການ, ບັນດາກົມ, ວາລະສານ, ພວກກ່ຽວ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 58/ຄອສພ,ລົງວັນທີ 30/3/2020 ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ ແລະມາດຕະການຕ້ານພະຍາດອັກເສບປອດຈາກເຊື້ອຈຸລະໂລກ COVID-19 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ລາວປາວຊົ່ງ ນະວົງໄຊ